**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຄູ່ມື

*ສຳລັບ*

# ການຄຸ້ມຄອງໂຄງການ ລົງທຶນຂອງລັດ

## ສະບັບປັບປຸງ ເດືອນ ສິງຫາ 2010

**ກະຊວງແຜນການ ແລະ ການລົງທຶນ**

ສິງຫາ 2010

# ຄຳເຫັນ

## ຂອງ ລັດຖະມົນຕີວ່າການກະຊວງແຜນການແລະການລົງທຶນ

ບັນດາທ່ານທີ່ນັບຖື !

ໃນໄລຍະຜ່ານມາ ລັດຖະບານໄດ້ທຸ້ມເທທຶນຮອນເປັນຈຳນວນຫຼວງຫຼາຍເຂົ້າໃນໂຄງການລົງທຶນ ເພື່ອພັດທະນາເສດຖະກິດສັງຄົມແຫ່ງຊາດ, ເຊິ່ງເຫັນໄດ້ວ່າມີຫຼາຍໂຄງການໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນສູງ. ຄຽງຄູ່ກັນນັ້ນ, ກໍ່ຍັງມີຫຼາຍໂຄງການໂດຍສະເພາະແມ່ນ ໂຄງການຂະໜາດໃຫຍ່ທີ່ຮຽກຮອ້ງເຖິງເຕັກນິກວິຊາການລະດັບສູງແມ່ນຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບແລະມີປະສິດທິຜົນເທົ່າທີ່ຄວນ, ເຊິ່ງເປັນຍອ້ນຫຼາຍສາຍເຫດເຊັ່ນ: ການຂາດການ ສຶກສາຂໍ້ມູນຢ່າງລະອຽດ, ລະບົບການປະເມີນຜົນບໍ່ເປັນໄປຕາມຂັ້ນຕອນ ແລະຕາມຫຼັກວິຊາການ, ລະບົບ ການຕິດຕາມກວດກາຍັງເຮັດບໍ່ໄດ້ດີ, ລະດັບຄວາມຮູ້ຄວາມສາມາດຂອງພະນັກງານຄຸ້ມຄອງໂຄງການ ຈຳນວນໜຶ່ງຍັງມີຂໍ້ຈຳກັດ, ການປະສານສົມທົບລະຫວ່າງບັນດາຂະແໜງການສູນກາງ ກັບ ທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ແລະ ບັນຫາອື່ນໆອີກ. ດັ່ງນັ້ນ, ການ ປັບປຸງຍົກລະດັບວຽກງານຄຸ້ມຄອງການລົງທຶນຂອງລັດຈຶ່ງມີບົດບາດສຳຄັນ ແລະ ສົມຄວນໄດ້ເອົາໃຈໃສ່ ເປັນຢ່າງຍິ່ງ.

ນັບວ່າເປັນໂອກາດດີທີ່ລັດຖະບານຍີ່ປຸ່ນ ກໍ່ຄືອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ໄດ້ໃຫ້ການ ຊ່ວຍເຫຼືອທາງດ້ານທຶນຮອນ ເພື່ອດຳເນີນໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງການລົງທຶນ ຂອງລັດ ຫຼື (ພີແຄັບ) ເຊິ່ງເປັນໂຄງການຮ່ວມມືທາງດ້ານວິຊາການລະຫວ່າງອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ແລະ ກະຊວງແຜນການ ແລະ ການລົງທຶນ. ຕະຫຼອດໄລຍະ 06 ປີກວ່າຜ່ານມາ, ໂຄງ ການໄດ້ເຮັດໜ້າທີ່ຄົ້ນຄວ້າ, ສ້າງ ແລະ ຝຶກອົບຮົມກ່ຽວກັບວິທີການປະເມີນຜົນ ແລະ ການຄຸ້ມຄອງໂຄງ ການລົງທຶນຂອງລັດໃຫ້ແກ່ພະນັກງານ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ໄດ້ປັບປຸງ ແລະ ພັດທະນາ ຄູ່ມືນີ້ຂຶ້ນ ເພື່ອເປັນເຄື່ອງມືໃຊ້ສຳລັບການຄຸ້ມຄອງໂຄງການລົງທຶນຂອງລັດ ໃນ ສປປ ລາວ.

ປື້ມຄູ່ມືນີ້ແມ່ນຜົນງານແລະໝາກຜົນທີ່ສຳຄັນທີ່ ກະຊວງ ແຜນການ ແລະ ການລົງທຶນ ໂດຍ ແມ່ນກົມປະເມີນຜົນ, ກົມແຜນການ ແລະ ກົມຮ່ວມມືສາກົນ ຮ່ວມກັບທີມງານຊ່ຽວຊານຍີ່ປຸ່ນ ແລະ ຊ່ຽວຊານພາຍໃນ ໄດ້ຮ່ວມກັນສ້າງ ແລະ ພັດທະນາຂຶ້ນ.

ຂ້າພະເຈົ້າເຫັນວ່າຄູ່ມືດັ່ງກ່າວນີ້ແມ່ນມີຄຸນປະໂຫຍດ ແລະ ມີຄວາມເໝາະສົມທີ່ຈະນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງໂຄງການລົງທຶນຂອງລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ໃນໂອກາດນີ້, ຂ້າພະເຈົ້າຈຶ່ງຮຽກຮ້ອງມາຍັງພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງໄດ້ເອົາໃຈໃສ່ ແລະ ເອົາໄປນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິຜົນສູງ.

ເຖິງແມ່ນວ່າ ໄດ້ມີຄວາມພະຍາຍາມສູງໃນການສ້າງຄູ່ມືນີ້ ເພື່ອໃຫ້ກາຍເປັນເຄື່ອງມືຮັບໃຊ້ວຽກງານຄຸ້ມຄອງການລົງທຶນຂອງລັດທີ່ດີທີ່ສຸດ, ແຕ່ກໍ່ບໍ່ອາດປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ແລະ ຂໍ້ຜິດພາດ ຊຶ່ງພວກຂ້າພະເຈົ້າຍິນດີຮັບເອົາຄຳຕິຊົມ, ຄຳແນະນຳ ແລະ ທຸກໆຂໍ້ຄຳຄິດເຫັນຈາກບັນດາທ່ານເພື່ອປັບປຸງຄູ່ມືນີ້ໃຫ້ຄົບຖ້ວນສົມບູນ.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງພະນັກງານຂອງກົມປະເມີນຜົນ, ພະນັກງານກົມແຜນການ, ກົມຮ່ວມມືສາກົນ ແລະ ພະນັກງານພະແນກແຜນການ ແລະ ການລົງທຶນ ແລະ ພະແນກການຕ່າງໆຂອງບັນດາແຂວງ ໂດຍສະເພາະແມ່ນແຂວງ ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ ທີ່ໄດ້ເອົາໃຈໃສ່ປະສານສົມທົບ, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ.

ຂໍສະແດງຄວາມຂອບໃຈມາຍັງລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ກໍ່ຄືອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ທີ່ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ແລະ ຂໍສະແດງຄວາມຂອບໃຈມາຍັງຄະນະຊ່ຽວຊານຍີ່ປຸ່ນພ້ອມຄູ່ຮ່ວມງານທີ່ໄດ້ທຸ້ມເທເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການຄົ້ນຄວ້າ, ສ້າງ ແລະ ພັດທະນາຄູ່ມືນີ້ຂຶ້ນມາ.

19 AUG 2010

ນະຄອນຫຼວງວຽງຈັນ,ວັນທີ ................

ລັດຖະມົນຕີວ່າການ

ກະຊວງແຜນການແລະການລົງທຶນ

ກະຊວງແຜນການແລະການລົງທຶນ ລັດຖະມົນຕີ

ດຣ. ສິນລະວົງ ຄຸດໄພທູນ

# ຄູ່ມືການຄຸ້ມຄອງໂຄງການລົງທຶນຂອງລັດ

ຄຳສັບຫຍໍ້


ພາກທີ I ນິຍາມ ແລະ ຂັ້ນຕອນການຄຸ້ມຄອງໂຄງການລົງທຶນຂອງລັດ

ພາກທີ II ວິທີການຄຸ້ມຄອງງົບປະມານໂຄງການລົງທຶນຂອງລັດ

ພາກທີ III ການກະກຽມໂຄງການສຳລັບເຈົ້າຂອງໂຄງການ

ພາກທີ IV ການປະເມີນ ແລະ ການປະເມີນົນໂຄງການລົງທຶນຂອງລັດ

ພາກທີ V ວິທີການທາງດ້ານເຕັກນິກໃນການຄຸ້ມຄອງໂຄງການລົງທຶນຂອງລັດ

ພາກທີ VI ແບບຟອມສຳລັບການຄຸ້ມຄອງການລົງທຶນຂອງລັດ


# ຄູ່ມືການຄຸ້ມຄອງແຜນງານການລົງທຶນຂອງລັດ

## ຄຳສັບຫຍໍ້

| | | |
|---|---|---|
| B/C | ອັດສ່ວນລາຍຮັບຕໍ່ລາຍຈ່າຍ | Cost and Benefit Ratio |
| B/D | ການອອກແບບເບື້ອງຕົ້ນ | Basic Design |
| ComPass | ການປະເມີນແບບປຽບທຽບ | Comparative Assessment |
| D/D | ການອອກແບບລະອຽດ | Detailed Design |
| DLM | ບັນດາກົມຂອງບັນດາກະຊວງ | Department of Line Ministry |
| DPI | ພະແນກແຜນການ ແລະ ການລົງທຶນປະຈຳແຂວງ | Provincial Department of Planning and Investment |
| DPSO | ຫ້ອງການສະຖິຕິແຜນການ ປະຈຳເມືອງ | District Planning and Statistics Office |
| EA | ການປະເມີນສິ່ງແວດລ້ອມ | Environmental Assessment |
| ECC | ໃບຢັ້ງຢືນສິ່ງແວດລ້ອມ | Environmental Compliance Certificate |
| EIA | ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ | Environmental Impact Assessment |
| EMP | ແຜນການຄຸ້ມຄອງສິ່ງແວດລ້ອມ | Environmental Management Plan |
| EPL | ກົດໝາຍປົກປັກຮັກສາສິ່ງແວດລ້ອມ | Environmental Protection Law |
| FAR | ບົດລາຍງານການຊ່ວຍເຫຼືອຂອງຕ່າງປະເທດ | Foreign Aid Report |
| F/S | ການສຶກສາຄວາມເປັນໄປໄດ້ | Feasibility Study |
| GIS | ລະບົບຂໍ້ມູນທາງພູມສາດ | Geographical Information System |
| GoL | ລັດຖະບານ ແຫ່ງ ສປປ ລາວ | Government of Laos |
| IEE | ການກວດສອບສິ່ງແວດລ້ອມເບື້ອງຕົ້ນ | Initial Environmental Examination |

| | | |
|---|---|---|
| IRR | ອັດຕາຜົນຕອບແທນພາຍໃນ | Internal Rate of Return |
| ISA | ການປະເມີນທາງດ້ານສັງຄົມເບື້ອງຕົ້ນ | Initial Social Assessment |
| JICA | ອົງການຮ່ວມມືສາກົນ ຍີ່ປຸ່ນ | Japan International Cooperation Agency |
| LACR | ບົດລາຍງານການທົດແທນ ແລະ ເວນຄືນທີ່ດິນ | Land Acquisition and Compensation Report |
| LM | ບັນດາກະຊວງຕ່າງໆ | Line Ministries |
| MAF | ກະຊວງກະສິກຳ ແລະ ປ່າໄມ້ | Ministry of Agriculture and Forestry |
| MEM | ກະຊວງພະລັງງານ ແລະ ບໍ່ແຮ່ | Ministry of Energy and Mining |
| MIC | ກະຊວງ ອຸດສາຫະກຳ ແລະ ການຄ້າ | Ministry of Industry and Commerce |
| MOE | ກະຊວງສຶກສາທິການ | Ministry of Education |
| MOF | ກະຊວງການເງິນ | Ministry of Finance |
| MPH | ກະຊວງສາທາລະນະສຸກ | Ministry of Public Health |
| MPI | ກະຊວງແຜນການ ແລະ ການລົງທຶນ | Ministry of Planning and Investment |
| MPI-DIC | ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ | Department of International Cooperation, Ministry of Planning and Investment |
| MPI-DOE | ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ | Department of Evaluation, Ministry of Planning and Investment |
| MPI-DOP | ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ | Department of Planning, Ministry of Planning and Investment |
| MPWT | ກະຊວງໂຍທາທິການ ແລະ ຂົນສົ່ງ | Ministry of Public Works and Transportation |

| | | |
|---|---|---|
| NGPES | ຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ | National Growth and Poverty Eradication Strategy |
| NLRP | ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ | National Leading Board for Rural Development and Poverty Alleviation |
| NPV | ມູນຄ່າປະຈຸບັນສຸດທິ | Net Present Value |
| NSEDP | ແຜນພັດທະນາເສດຖະກິດ ສັງຄົມແຫ່ງຊາດ | National Socio-Economic Development Plan |
| PCAP1 | ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງການລົງທຶນລັດ | Project for Capacity Building in PIP Management |
| PCAP2 | ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ | Project for Enhancing Capacity in PIP Management |
| PIP | ການລົງທຶນລັດ | Public Investment Program |
| PM | ນາຍົກລັດຖະມົນຕີ | Prime Minister |
| PMO | ສຳນັກງານນາຍົກລັດຖະມົນຕີ | Prime Minister’s Office |
| PO | ເຈົ້າຂອງໂຄງການ | Project Owner |
| PWREO | ຫ້ອງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມປະຈຳແຂວງ | Provincial Water Resources and Environmental Office |
| RP | ແຜນຍົກຍ້າຍຈັດສັນ | Resettlement Plan |
| SDP | ແຜນພັດທະນາສັງຄົມ | Social Development Plan |

| | | |
|---|---|---|
| SEDP | ແຜນພັດທະນາເສດຖະກິດ- ສັງຄົມ | Socio-Economic Development Plan |
| SIA | ການປະເມີນຜົນກະທົບທາງດ້ານສັງຄົມ | Social Impact Assessment |
| SPAS | ແຜ່ນປະເມີນໂຄງການແບບກະທັດຮັດ | Simplified Project Assessment Sheet |
| SPES | ແຜ່ນປະເມີນຜົນໂຄງການແບບກະທັດຮັດ | Simplified Project Evaluation Sheet |
| WREA | ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ | Water Resources and Environmental Administration |